ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*********************

ສຳນັກງານນາຍົກລັດຖະມົນຕີ ເລກທີ: 37/ ນຍ

ນະຄອນຫຼວງວຽງຈັນ, ວັນທີ 24 ຕຸລາ 2006

**ຄຳສັ່ງ**

**ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ.**

ເຖິງ: ບັນດາທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເຈົ້າແຂວງ ໃນທົ່ວປະເທດ.

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມການສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ1340/ອຄ, ລົງວັນທີ 2 ຕຸລາ 2006.

ເພື່ອເຮັດໃຫ້ເນື້ອໃນຈິດໃຈຂອງກົດໝາຍ ວ່າດ້ວຍວິສາຫະກິດ ຊຶ່ງເປັນກົດໝາຍໜຶ່ງທີ່ມີຄວາມສຳຄັນທາງດ້ານເສດຖະກິດຂອງປະເທດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ ແລະ ມີປະສິດທິຜົນສູງ ເຮັດໃຫ້ມີການປ່ຽນແປງຢ່າງແທ້ຈິງ ໃນການແກ້ໄຂສະພາບທີ່ເປັນອຸປະສັກກີດຂວາງ ທຸກຮູບແບບຕໍ່ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດ ອັນສ້າງຜົນເສຍຕໍ່ການພັດທະນາວິສາຫະກິດ ແລະ ເພື່ອສ້າງສະພາບແວດລ້ອມທາງດ້ານທຸລະກິດ ທີ່ເອື້ອອຳນວຍ ໃຫ້ແກ່ການລົງທຶນຂອງທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດ, ສົ່ງເສີມການປະກອບອາຊີບ ຂອງປະຊາຊົນລາວບັນດາເຜົ່າ, ສ້າງວຽກເຮັດງານທຳ, ສ້າງລາຍໄດ້, ຫຼຸດຜ່ອນຄວາມທຸກຍາກເຮັດໃຫ້ເສດຖະກິດຂອງປະເທດ ໄດ້ມີການພັດທະນາ, ຂະຫຍາຍຕົວໃນຈັງຫວະໄວກ່ວາເກົ່າ ແລະ ມີຄວາມໜັກແໜ້ນໂດຍມີວິສາຫະກິດ ທີ່ເປັນພື້ນຖານເສົາຄ້ຳ ຢ່າງເຂັ້ມແຂງ.

**ນາຍົກລັດຖະມົນຕີ ອອກຄຳສັ່ງ:**

1. ໃຫ້ດຳເນີນການຈັດຕັ້ງການຂຶ້ນທະບຽນວິສາຫະກິດ ດ້ວຍ"ລະບົບປະຕູດຽວ"ຕາມກົດໝາຍວິສາຫະກິດ ຢ່າງເຂັ້ມງວດ. ຫ້າມບໍ່ໃຫ້ບຸກຄົນ ຫຼື ພາກສ່ວນໃດ, ສ້າງຂັ້ນຕອນເພີ່ມເຕີມ ຫຼື ວາງໄລຍະເວລາພິຈະລະນາຍາວກ່ວາ ຫຼື ກຳນົດໃຫ້ເປັນຢ່າງອື່ນທີ່ຂັດກັບຂໍ້ກຳນົດຂອງກົດໝາຍວ່າດ້ວຍວິສາຫະກິດ, ໃນນີ້:

- ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນໃຈກາງໃນການຈັດຕັ້ງປະຕິບັດການຂຶ້ນທະບຽນວິສາຫະກິດລະບົບ "ປະຕູດຽວ" ທີ່ວ່ອງໄວ, ງ່າຍດາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 226 ຂອງກົດໝາຍ ວ່າດ້ວຍວິສາຫະກິດ ຢ່າງເຂັ້ມງວດ.

- ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຮີບຮ້ອນປັບປຸງ ພາກສ່ວນທະບຽນວິສາຫະກິດຂອງກະຊວງ, ພະແນກ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນທ້ອງຖິ່ນ ທີ່ມີໃນປະຈຸບັນ ໃຫ້ກາຍເປັນຫ້ອງການ ຫຼື ອົງການເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ ກາຍເປັນຖານຂໍ້ມູນແຫ່ງຊາດ(National database) ກ່ຽວກັບທະບຽນວິສາຫະກິດ ເພື່ອໃຊ້ສຳລັບການກວດສອບ, ຕິດຕາມ ຫຼື ງ່າຍແກ່ການຄຸ້ມຄອງເປັນເອກະພາບກັນ ລະຫວ່າງຂະແໜງການທີ່ກ່ຽວຂ້ອງເປັນຕົ້ນແມ່ນ: ລະຫວ່າງການຄ້າ, ທະນາຄານ, ການເງິນ ແລະ ສູນສະຖິຕິ ຕາມເນື້ອໃນຈິດໃຈຂອງກົດໝາຍ ວ່າດ້ວຍວິສາຫະກິດໂດຍໄວ;

- ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນໃຈກາງໃນການປະສານກັບບັນດາກະຊວງຕ່າງໆທີ່ກ່ຽວຂ້ອງ ໂດຍສະເພາະແມ່ນ ຄະນະກຳມະການແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ເພື່ອປຶກສາຫາລືສ້າງຄວາມເປັນເອກະພາບ ແລະ ຈັດຕັ້ງປະຕິບັດເນື້ອໃນຈິດໃຈ, ຂັ້ນຕອນ ແລະ ວິທີການຂຶ້ນທະບຽນວິສາຫະກິດດ້ວຍ" ລະບົບປະຕູດຽວ" ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 14 ແນໃສ່ຮັບປະກັນຜົນຂອງການຂຶ້ນທະບຽນວິສາຫະກິດໃຫ້ຖືກຕ້ອງໃນສີ່ປະການຕາມທີ່ໄດ້ບົ່ງໄວ້ໃນມາດຕາ 16 ຂອງກົດໝາຍ ວ່າດ້ວຍວິສາຫະກິດ ຢ່າງແທ້ຈິງ.

2. ໃຫ້ບັນດາກະຊວງ ແລະ ອົງການທຽບເທົ່າກະຊວງທີ່ກ່ຽວຂ້ອງ ເປັນເຈົ້າການ ຄົ້ນຄ້ວາປະເພດທຸລະກິດທີ່ຈະຮັກສາໄວ້ໃນບັນຊີຄວບຄຸມ ຫຼື ກວດສອບກ່ອນການຂຶ້ນທະບຽນວິສາຫະກິດ(Nagative list) ຂອງຂະແໜງການຕົນຕາມເງື່ອນໄຂທີ່ໄດ້ບົ່ງໄວ້ໃນຂີດຫຍໍ້ໜ້າ3 ມາດຕາ 2 ກົດໝາຍ ວ່າດ້ວຍວິສາຫະກິດ ແລະ ສະເໜີລັດຖະບານຮັບຮອງຕາມທີ່ໄດ້ກຳນົດໄວ້ໃນທ້າຍໜ້າ4 ມາດຕາ 14 ກົດໝາຍວ່າດ້ວຍວິສາຫະກິດ ໃຫ້ແລ້ວຊ້າສຸດທ້າຍງວດໜຶ່ງ ປີ2007. ພາຍຫຼັງລັດທະບານຮັບຮອງດັ່ງກ່າວໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ລວບລວມເຂົ້າເປັນບັນຊີແລ້ວເຮັດແຈ້ງການປະກາດໃຫ້ທົ່ວສັງຄົມໄດ້ຮັບຊາບ.

3. ການສະເໜີປະເພດທຸລະກິດທີ່ຈະຮັກສາໄວ້ໃນບັນຊີຄວບຄຸມ ຫລື ກວດສອບກ່ອນການຂຶ້ນທະບຽນວິສາຫະກິດຂອງບັນດາຂະແໜງການໃຫ້ລັດຖະບານຮັບຮອງນັ້ນຕ້ອງແມ່ນປະເພດທຸລະກິດທີ່ມີຄວາມຈຳເປັນແທ້ ແລະ ຕ້ອງມີເຫດຜົນປະກອບຈະແຈ້ງຕາມເງື່ອນໄຂທີ່ໄດ້ບົ່ງໄວ້ໃນຂີດໜ້າຫຍໍ້ 3 ມາດຕາ 2 ກົດໝາຍວ່າດ້ວຍວິສາຫະກິດ, ແນໃສ່ສົ່ງເສີມພັດທະນາວິສາຫະກິດຊຶ່ງເປັນຈຸລັງສຳຄັນຂອງການພັດທະນາທາງດ້ານເສດຖະກິດ, ລຸດຜ່ອນກາງຄວບຄຸມທີ່ເປັນການສ້າງຄວາມລຳຄານແກ່ການສ້າງຕັ້ງ ແລະ ດຳເນີນທຸລະກິດໃຫ້ໄດ້ຢ່າງຈິງຈັງ.

4. ການແຈ້ງຂຶ້ນທະບຽນວິສາຫະກິດ ( ບໍ່ວ່າຈະເປັນຜູ້ລົງທຶນພາຍໃນ ຫລື ຕ່າງປະເທດ) ເພື່ອດຳເນີນທຸລະກິດ ໃນປະເພດທຸລະກິດທີ່ຢູ່ນອກບັນຊີຄວບຄຸມ ( None - Negative List) ກ່ອນການຂຶ້ນທະບຽນວິສາຫະກິດນັ້ນເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງປະຕິບັດດ້ວຍຮູບການທີ່ງ່າຍດາຍ, ສະດວກສະບາຍ ແລະ ໄວທີ່ສຸດ ແນໃສ່ສົ່ງເສີມການປະກອບອາຊີບ ຫລື ສ້າງພົນລະເມືອງ ເຮັດທຸລະກິດທີ່ຖືກຕ້ອງໃຫ້ນັບມື້ນັບຂະຫຍາຍຕົວຢ່າງກ້ວາງຂວາງ, ເວັ້ນເສຍແຕ່ລະບຽບກົດໝາຍ ໄດ້ກຳນົດບາງຂໍ້ຈຳກັດຫລື ຂໍ້ຫ້າມຢ່າງອື່ນໄວ້ ສຳລັບຜູ້ລົງທຶນຕ່າງປະເທດ ຫລື ຜູ້ລົງທຶນທີ່ບໍ່ແມ່ນພົນລະເມືອງລາວ ເຊັ່ນ: ການປະກອບອາຊີບທີ່ສະຫງວນໄວ້ສຳລັບພົນລະເມືອງລາວ.

5. ການແຈ້ງຂຶ້ນທະບຽນວິສາຫະກິດ ເພື່ອດຳເນີນທຸລະກິດ ໃນປະເພດທຸລະກິດທີ່ຢູ່ໃນບັນຊີຄວບຄຸມ ກ່ອນການຂຶ້ນທະບຽນວິສາຫະກິດນັ້ນຕ້ອງໄດ້ຮັບການກວດສອບຢັ້ງຢືນຫລື ອະນຸຍາດຈາກຂະແໜງການຕາມລະບຽບກົດໝາຍທີ່ກ່ຽວຂ້ອງກ່ອນ ໂດຍມີຄະນະກຳມະການຄົ້ນຄ້ວາ ແລະ ພິຈາລະນາພາຍໃນກຳນົດເວລາ 10 ວັນ ( ວັນລັດຖະການ)ແລ້ວສົ່ງໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເພື່ອຂຶ້ນທະບຽນພາຍໃນກຳນົດ3 ວັນ (ວັນລັດຖະການ) ຕາມທີ່ໄດ້ບົ່ງໄວ້ໃນວັກ 2 ມາດຕາ 14 ຂອງກົດໝາຍວ່າດ້ວຍວິສາຫະກິດ.

ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ, ຄະນະກຳມະການແຜນການ ແລະ ການລົງທຶນປະສານກັບຂະແໜງການກ່ຽວຂ້ອງປຶກສາຫາລື ແລະ ຕົກລົງກ່ຽວກັບ" ການບໍລິການປະຕູດຽວ" ທີ່ວ່ອງໄວ, ງ່າຍດາຍ, ເພື່ອພິຈາລະນາອອກໃບຢັ້ງຢືນ ຫລື ໃບອະນຸຍາດສ້າງຕັ້ງ ທຸລະກິດທີ່ນອນໃນບັນຊີຄວບຄຸມກ່ອນແຈ້ງຂຶ້ນທະບຽນ.

6. ສຳລັບການຂຶ້ນທະບຽນອາກອນ, ນອກຈາກປົດບັນຍັດ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 4 ມາດຕາ 16 ກົດໝາຍວ່າດ້ວຍວິສາຫະກິດ; ຂະແໜງການເງິນ ມີສິດ ແລະ ໜ້າທີ່ ຂຶ້ນທະບຽນອາກອນໃຫ້ບຸກຄົນ ຫລື ນິຕິບຸກຄົນອື່ນໆ ທີ່ເຫັນວ່າມີຄວາມຈຳເປັນຕ້ອງຂຶ້ນທະບຽນອາກອນ ເພື່ອຕິດຕາມການເສຍພັນທະອາກອນຂອງພວກກ່ຽວ.

7. ໃຫ້ພາກສ່ວນທີ່ກ່ຽວຂ້ອງກັບການຄຸ້ມຄອງລັດວິສາຫະກິດຂອງສຳນັກງານນາຍົກ ລັດຖະມົນຕີ ແລະ ກະຊວງການເງິນ ຮີບຮ້ອນຄົ້ນຄ້ວາວິທີການ ແລະ ມາດຕະການ ໃນການຫັນການຄຸ້ມຄອງ ຫລື ການບໍລິຫານຈັດການຂອງລັດວິສາຫະກິດ ໄປສູ່ຮູບການສ້າງຕັ້ງ, ເຄື່ອນໄຫວ ແລະ ຄຸ້ມຄອງແບບໃໝ່ພາຍໃຕ້ຫລັກການຂອງບໍລິສັດ ຕາມທີ່ໄດ້ກຳນົດໄວ້ໃນພາກ VI ຂອງກົດໝາຍວ່າດ້ວຍວິສາຫະກິດ.

8. ພາຍຫລັງວິສາຫະກິດໄດ້ຂຶ້ນທະບຽນແລ້ວ ທຸກຂະແໜງການທີ່ກ່ຽວຂ້ອງຕ້ອງປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 230 ກົດໝາຍວ່າດ້ວຍວິສາຫະກິດ ຢ່າງຕັ້ງໜ້າ ແລະ ເປັນເຈົ້າການ;

9. ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການ ໃນການປະສານກັບບັນດາຂະແໜງທີ່ກ່ຽວຂ້ອງ(ລວມທັງການຈັດຕັ້ງທຸລະກິດ ແລະ ຫົວໜ່ວຍທຸລະກິດຕ່າງໆ)ຄົ້ນຄ້ວາບັນດາບັນຫາທີ່ເຫັນວ່າເປັນອຸປະສັກ, ສ້າງຄວາມລຳຄານ ແກ່ການປະກອບອາຊີບຂອງປະຊາຊົນ, ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດຂອງວິສາຫະກິດ ເພື່ອກຳນົດມາດຕະການ ໃນການປັບປຸງແກ້ໄຂຢ່າງຕໍ່ເນື່ອງ ໃນແຕ່ລະໄລຍະ ແລ້ວນຳສະເໜີລັດຖະບານ ເພື່ອຂໍການຊີ້ນຳ;

10. ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຄົ້ນຄ້ວາອອກລະບຽບການລະອຽດໂດຍໄວ ກ່ຽວກັບ: ແບບຟອມເອກະສານຄຳຮ້ອງແຈ້ງຂຶ້ນທະບຽນ, ວິທີການຈັດສະຖານທີ່ຂຶ້ນທະບຽນ, ຂັ້ນຕອນ, ກຳ

ນິດເວລາທີ່ໃຊ້ໃນການພິຈາລະນາໃນແຕ່ລະຂັ້ນຕອນ, ຄ່າທຳນຽມເອກະສານທັງໝົດທີ່ຕ້ອງຈ່າຍ ສຳລັບການແຈ້ງຂຶ້ນທະບຽນ ແລະ ອື່ນໆທີ່ເຫັນວ່າມີຄວາມຈຳເປັນ ເພື່ອປະຕິບັດ ແລະ ນຳໃຊ້ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດໂດຍໄວ;

11. ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການທຽບເທົ່າອ້ອມຂ້າງສູນກາງ, ເຈົ້າຄອງນະຄອນຫລວງວຽງຈັນ, ບັນດາທ່ານເຈົ້າແຂວງ ໃນທົ່ວປະເທດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນ.

12. ຄຳສັ່ງແນະນຳ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

**ບົວສອນ ບຸບຜາວັນ**